**ອະນຸສັນຍາ**

**ດັດແກ້ ແລະ ເພີ້ມເຕີມສັນຍາວ່າດ້ວຍລະບຽບການຊາຍແດນ**

**ປະເທດ ລະຫວ່າງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ**

**ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ**

**ສະບັບ ວັນທີ 1 ມີນາ 1990**

---

ລັດຖະບານແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ;

ອີງຕາມ ມາດຕາ 35, ຂໍ້ ກ ຂອງສັນຍາວ່າດ້ວຍລະບຽບການຊາຍແດນ ປະເທດ ລະຫວ່າງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ສະບັບລົງວັນທີ 1 ມີນາ 1990 ຊຶ່ງກຳນົດວ່າສັນຍາ ອາດຈະໄດ້ຮັບການດັດແກ້ ແລະ ເພີ້ມເຕີມຕາມ ການຕົກລົງ ຂອງຄູ່ສັນຍາ,ໄດ້ຕົກລົງດັດແປງ ແລະ ເພີ້ມເຕີມບາງມາດຕາດັ່ງຕໍ່ໄປນີ້:

## ມາດຕາ1

### ເພີ້ມເຕີມໃສ່ທ້າຍຂອງຂໍ້ -ກ ມາດຕາ 1

ໃນກໍລະນີມີການກໍ່ສ້າງຫລັກຫມາຍໃຫມ່ຢູ່ໃນບ່ອນເກົ່າ ຫລື ໃນບ່ອນໃຫມ່ກໍ່ຕາມ ເພື່ອປ່ຽນແທນຫລັກຫມາຍເກົ່າ, ກໍ່ຄືການປະຕິບັດບັນດາວຽກງານທີ່ຢັ້ງຢືນເສັ້ນຊາຍແດນ ແລະ ຫລັກຫມາຍຊາຍແດນທີ່ຄະນະກຳມະການປະສົມເຮັດຍັງບໍ່ທັນສຳເລັດ, ທັງສອງຝ່າຍ ຈະເຮັດ ເອກກະສານບັນທຶກຂໍ້ມູນລະອຽດຕ່າງໆ ຕາມລະບຽບການທີ່ຄະນະກຳມະການປະສົມໄດ້ກຳນົດໄວ້. ຕາມ ການຕົກລົງຂອງ ສອງຝ່າຍໃນເວລາປະຕິບັດ ບັນດາວຽກງານທີ່ກ່າວມາຂ້າງເທິງ, ພາຍຫລັງໄດ້ຮັບການຮັບຮອງ ຈາກລັດຖະບານ ສອງປະເທດແລ້ວ ໃຫ້ຖືວ່າບັນດາເອກກະສານດັ່ງກ່າວນີ້ ເປັນເອກກະສານເພີ້ມເຕີມທີ່ຕິດແນບ ຫລື ປ່ຽນແທນບັນດາສາລະບານ ທີ່ມີຊື່ຄືກັນ ຕິດແນບສົນທິສັນຍາວ່າດ້ວຍການກຳນົດເສັ້ນຊາຍແດນປະເທດ ທີ່ໄດ້ເຊັນກັນໃນວັນທີ 18 / 7 / 1977 ແລະ ສົນທິສັນຍາເພີ້ມເຕີມທີ່ໄດ້ເຊັນກັນໃນວັນທີ 24 / 1 / 1986.

<u>ມາດຕາ 2</u>

**ເພີ້ມເຕີມ ເປັນວັກ 3 ມາດຕາ 2**

ຄູ່ສັນຍາ ຕ້ອງມີວິທີການສະກັດກັ້ນ ຢ່າງເດັດຂາດ ທຸກການກະທຳ ທີ່ພາໃຫ້ເສັ້ນຊາຍແດນທາງບົກມີການປ່ຽນແປງ; ບໍ່ອະນຸຍາດໃຫ້ຝ່າຍໃດຝ່າຍໜຶ່ງປຸກສ້າງກິດຈະການໃດໆຕື່ມຕາມລຳພັງໃຈໃນຂອບເຂດ 100 (ໜຶ່ງຮ້ອຍ) ແມັດ ຫ່າງຈາກເສັ້ນຊາຍແດນ ຂອງ ແຕ່ລະເບື້ອງ. ຖ້າຫາກວ່າຝ່າຍໃດ ຝ່າຍຫນຶ່ງ ມີຄວາມຈຳເປັນ ຢາກປຸກສ້າງກິດຈະການໃດໜຶ່ງ ຢູ່ໃນຂອບເຂດດັ່ງກ່າວນັ້ນຕ້ອງແຈ້ງ ແລະ ປຶກສາຫາລື ກັບ ອີກຝ່າຍໜຶ່ງກ່ອນ ບົນພື້ນຖານເຄົາລົບສິດອຳນາດອະທິປະໄຕ,ຜົນປະໂຫຍດຂອງກັນ ແລະ ກັນ,ໂດຍສອດຄ່ອງກັບເງື່ອນໄຂຂອງສະພາບພື້ນທີ່ຕົວຈິງ.

<u>ມາດຕາ 3</u>

**ດັດແປງ ຂໍ້-ກ ມາດຕາ 14**

ພົນລະເມືອງທີ່ຕັ້ງພູມລຳເນົາຢູ່ໃນເຂດຊາຍແດນຟາກນີ້ ໄດ້ຮັບອະນຸຍາດໃຫ້ຂ້າມຜ່ານຊາຍແດນໄປຟາກນັ້ນ ໃນຂອບເຂດບ້ານ,ຕາແສງທີ່ມີຊາຍແດນຕິດກັນ ແລະ ໃກ້ຄຽງກັນເພື່ອຊື້ຂາຍ ແລະ ແລກປ່ຽນສິນຄ້າທີ່ຈຳເປັນຮັບໃຊ້ໃຫ້ແກ່ການຜະລິດ ແລະ ການດຳລົງຊີວິດປະຈຳວັນ, ການຢ້ຽມຢາມພີ່ນ້ອງ,ຊົມຮູບເງົາ, ຊົມສິນລະປະວັນນະຄະດີ.

<u>ມາດຕາ 4</u>

**ເພີ້ມເຕີມເປັນຂໍ້ -ຄ ມາດຕາ 18**

ຖ້າທັງສອງຝ່າຍຕ້ອງການຈະຍົກລະດັບດ່ານສຳຮອງຂຶ້ນເປັນດ່ານສຳຄັນ, ຈາກດ່ານສຳຄັນຂຶ້ນເປັນດ່ານສາກົນ ແລະ ປ່ຽນຊື່ດ່ານສຳຄັນ,ດ່ານສາກົນ ສອງຝ່າຍຈະແລກປ່ຽນເອກກະສານນຳກັນໂດຍຜ່ານທາງການທູດ, ເມື່ອໃດໄດ້ຮັບການຕົກລົງເຫັນດີຈາກລັດຖະບານຂອງທັງສອງປະເທດແລ້ວຈຶ່ງໄດ້ຈັດຕັ້ງປະຕິບັດ.

<u>ມາດຕາ 5</u>

**ເພີ້ມເຕີມເປັນຂໍ້-ງ ມາດຕາ 19**

ພົນລະເມືອງ ຂອງ ສອງແຂວງ ທີ່ມີເສັ້ນຊາຍແດນຕິດຈອດກັນ ສາມາດໃຊ້ໃບຜ່ານແດນທີ່ອອກໃຫ້ໂດຍເຈົ້າໜ້າທີ່ຕຳຫລວດຂັ້ນແຂວງ ໃນການຂ້າມຜ່ານດ່ານສຳຄັນ, ດ່ານສາກົນ ເພື່ອປະຕິບັດວຽກງານ ແລະ ຢ້ຽມຢາມມິດຕະພາບ. ໃບຜ່ານແດນຕ້ອງບອກແຈ້ງຈຸດປະສົງຂອງການໄປ ແລະ ມີຄຸນຄ່າໃຊ້ພາຍໃນຂອບເຂດ ແຂວງຊາຍແດນ ທີ່ມີຊາຍແດນຮ່ວມກັນ.

## ມາດຕາ 6

### ດັດແປງຂໍ້-ກ ແລະ ຂ ມາດຕາ 21

ກ./ ກໍລະນີທີ່ ພົນລະເມືອງເຂດຊາຍແດນເບື້ອງໜຶ່ງ ຢາກຍົກຍ້າຍ ໄປຢູ່ເຂດຊາຍແດນອີກເບື້ອງໜຶ່ງນັ້ນ ຕ້ອງຂໍອະນຸຍາດ ຈາກອຳນາດການປົກຄອງຂັ້ນແຂວງຂອງຕົນ. ຖ້າເຫັນວ່າຄວາມມຸ້ງຫວັງຂອງເຂົາເຈົ້າຫາກສົມເຫດສົມຜົນ, ອົງການປົກຄອງຂັ້ນແຂວງ ຂອງຜູ້ກ່ຽວຕ້ອງປຶກສາຫາລືກັບອົງການປົກຄອງຂັ້ນແຂວງອີກຝ່າຍໜຶ່ງ, ແລ້ວລາຍງານຕໍ່ອົງການທີ່ມີສິດກ່ຽວຂ້ອງເພື່ອນຳສະເໜີຕໍ່ລັດຖະບານຂອງຕົນພິຈາລະນາອະນຸມັດ. ພາຍຫລັງ ທີ່ໄດ້ຮັບການອະນຸມັດ ຈາກລັດຖະບານທັງສອງປະເທດແລ້ວ ຈຶ່ງຍົກຍ້າຍໄດ້.

ຂ./ ເມື່ອຝ່າຍໃດຝ່າຍໜຶ່ງ ຫາກພົບເຫັນ ພົນລະເມືອງ ຂອງອີກຝ່າຍໜຶ່ງຍົກຍ້າຍຂ້າມຊາຍແດນ ໄປຕັ້ງພູມລຳເນົາ ຢູ່ອີກເບື້ອງໜຶ່ງຕາມລຳພັງໃຈ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບໂດຍດ່ວນເພື່ອຮ່ວມກັນແກ້ໄຂ ບົນພື້ນຖານ ເຄົາລົບສິດອຳນາດອະທິປະໄຕ ແລະ ລະບຽບກົດໝາຍຂອງແຕ່ລະຝ່າຍ.

## ມາດຕາ 7

### ດັດແປງ ຂໍ້-ກ ມາດຕາ 27

ການສຳຫລວດທໍລະນີສາດ ແລະ ຂຸດຄົ້ນບໍ່ແຮ່ໃນຂອບເຂດຊາຍແດນ ແມ່ນໃຫ້ດຳເນີນພຽງແຕ່ຢູ່ເທິງດິນແດນຂອງຝ່າຍຕົນ. ເມື່ອຝ່າຍໃດໜຶ່ງມີຄວາມຕ້ອງການສຳຫລວດທໍລະນີສາດ ແລະ ຂຸດຄົ້ນບໍ່ແຮ່ໃນຂອບເຂດທີ່ຫ່າງຈາກເສັ້ນຊາຍແດນເບື້ອງລະ 500 (ຫ້າຮ້ອຍ )ແມັດ ຕ້ອງແຈ້ງ ແລະ ປຶກສາຫາລືກັບອີກຝ່າຍໜຶ່ງກ່ອນ ບົນພື້ນຖານເຄົາລົບສິດອຳນາດອະທິປະໄຕ, ຜົນປະໂຫຍດຂອງກັນ ແລະ ກັນ ແລະ ໃຫ້ເໝາະສົມກັບເງື່ອນໄຂ, ສະພາບຕົວຈິງ. ການຂຸດຄົ້ນບັນດາບໍ່ແຮ່ທີ່ນອນຢູ່ເທິງເສັ້ນຊາຍແດນຕ້ອງມີການຕົກລົງ ແລະ ໄດ້ຮັບການອະນຸຍາດຈາກລັດຖະບານທັງສອງປະເທດ.

## ມາດຕາ 8

### ດັດແປງ ແລະ ເພີ້ມເຕີມ ມາດຕາ 29

ຄູ່ສັນຍາຕ້ອງໃຊ້ມາດຕະການອັນເດັດຂາດ ຕາມລະບຽບກົດໝາຍຂອງຝ່າຍຕົນຕໍ່ຜູ້ທີ່ກະທຳຜິດ ແລະ ຜູ້ລະເມີດສັນຍາ ວ່າດ້ວຍລະບຽບການຊາຍແດນ ປະເທດ ລະຫວ່າງ ສອງປະເທດ.

ສຳຫລັບຜູ້ທີ່ລະເມີດ ລະບຽບການເຂົ້າ-ອອກຜ່ານຊາຍແດນ, ຖ້າແມ່ນພົນລະເມືອງຂອງຝ່າຍໃດຕ້ອງສົ່ງໃຫ້ຝ່າຍນັ້ນແກ້ໄຂ, ຍົກເວັ້ນກໍລະນີລະເມີດກົດໝາຍອາຍາ.

ການມອບຮັບຜູ້ກະທຳຜິດ ແລະ ຜູ້ລະເມີດດັ່ງກ່າວ ຕ້ອງເຮັດບົດບັນທຶກ ເພື່ອບັນທຶກໄວ້ການກະທຳຜິດຂອງຜູ້ກ່ຽວ, ສຳລັບຫລັກຖານຂອງກາງ ຕ້ອງແກ້ໄຂ ຕາມລະບຽບກົດໝາຍຂອງຝ່າຍຈັບ.

## ມາດຕາ 9

ອະນຸສັນຍາສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ທີ່ມີການແລກປ່ຽນ ເອກກະສານ ທີ່ເປັນລາຍລັກອັກສອນ ຜ່ານທາງການທູດ ແຈ້ງໃຫ້ກັນຊາບ ກ່ຽວກັບການສຳເລັດ ທຸກຂັ້ນຕອນທີ່ຈຳເປັນ ຂອງຄູ່ສັນຍາ.

ເຮັດທີ່ ນະຄອນ ເຫວ້ ແຂວງ ເທືອ ທຽນ ເຫວ້ , ວັນທີ 31 ສິງຫາ 1997 ເປັນສອງສະບັບຕົ້ນ, ດ້ວຍ ສອງພາສາ, ພາສາ ຫວຽດນາມ ແລະ ພາສາລາວ , ທັງສອງສະບັບ ມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ
ສາທາລະນະລັດ
ສັງຄົມນິຍົມ ຫວຽດນາມ

ຕາງໜ້າລັດຖະບານ
ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນ ລາວ